
ພຸທທປວັດ
ພຣະພຸທທສາສນາ
ໂດຍ: ທານ ບືອາວັນ
ຈັກປ້າແດງ



ຄຳເຫັນຈາກຜູ້ຄົ້ນຄວ້າແລະຈັດພິມ

ເນື່ອງຈາກວ່າຂ້າພະເຈົ້າໄດ້ຫຼິງເຫັນຄວາມຈຳເປັນຂອງພຸທສາຊນິກະຊົນລາວເຮົາໂດຍສະເພາະແມ່ນຢູ່ຕ່າງປະເທດນີ້ແມ່ນຍັງຂາດຄວາມຮູ້ພື້ນຖານກ່ຽວກັບພຸທສາສນາ ທີ່ທຸກຄົນກໍອ້າງວ່າເປັນສາສນາປະຈຳຊາຕ ແລະ ນັບຖືມາຕັ້ງແຕ່ບັນພະບູຣຸຕຂອງພວກເຮົາ. ແຕ່ຖ້າມີຄົນອື່ນຖາມກ່ຽວກັບຄວາມເປັນມາຂອງພຣະພຸທສາສນາ ແລ້ວ ສ່ວນມາກຈະບໍ່ມີຄຳຕອບຫຼືບໍ່ຮູ້ຄຳຕອບເລີຍ. ສະນັ້ນ, ຂ້າພະເຈົ້າເອງ ໜູ ນິຣາວັນ (ຈຳປາແດງ) ຈຶ່ງໄດ້ຄົ້ນຄວ້າການນຳປຶ້ມອ່ານຕ່າງໆ ທີ່ກ່ຽວຂ້ອງກັບພຸທສາສນາ ທີ່ຂ້າພະເຈົ້າໄດ້ມາຈາກບ້ານເຮົາ ແລະ ຄົ້ນຄວ້າຈາກ ແວັບໄຊທ໌ຂອງຊາວພຸທອິນເດັຽ ແລະ ຊາວພຸທໄທຍ໌ແລະອື່ນໆ. ຫຼັງຈາກນັ້ນ, ຂ້າພະເຈົ້າຈຶ່ງໄດ້ຈັດພິມແລະຮຽບຮຽງ ປຶ້ມພຸທປວັດຫົວນີ້ເປັນພາສາລາວຂຶ້ນ ມາເພື່ອຄົນລາວຜູ້ທີ່ມັກຮັກໃນການຄົ້ນຄວ້າ ຊອກຮຽນຮູ້ໄດ້ນຳໄປເປັນບົດຮຽນ. ນອກຈາກນັ້ນ ຂ້າພະເຈົ້າຍັງຈັດໃຫ້ເປັນຣະບົບແວັບໄຊທ໌ ເພື່ອຄົນສ່ວນຫຼາຍທີ່ໃຊ້ຣະບົບນີ້ຈະໄດ້ເຂົ້າໄປອ່ານ ຮຽນ ພິມອອກ ແລະ ຄົ້ນຄວ້າ.



ຂ້າພະເຈົ້າເອງບໍ່ແມ່ນນັກບວດ ຫຼືໄດ້ຜ່ານການບວດບັນພະຊິດມາແຕ່ຢ່າງໃດເລີຍ. ແຕ່ກໍໄດ້ຮ່ຳຮຽນຢູ່ຕາມໂຮງຮຽນທັງປະຖົມ ແລະ ວິທຍາລັຍຄຣູສວັນນະເຂດ ຈຶ່ງພໍເກັບກຳແລະສົມທຽບເອົາສິ່ງທີ່ຄົ້ນຄວ້າ ແລະ ຄວາມຮູ້ພື້ນຖານປະສົມປະສານກັນ. ຕາມທີ່ຂ້າພະເຈົ້າໄດ້ສຶກສາຄົ້ນຄວ້າ



ມາຈາກຫຼາຍໆບ່ອນ. ສໍາລັບລາຍລະອຽດບາງຕອນແຕ່ລະບ່ອນຈະມີຄວາມແຕກຕ່າງກັນຫຼາຍສົມຄວນ. ສະນັ້ນ, ຂ້າພະເຈົ້າຈຶ່ງຈໍາເປັນທີ່ສຸດຕ້ອງ ເລືອກເຟັ້ນແລະຂຽນເອົາແຕ່ສິ່ງທີ່ຕົນໄດ້ຮໍ່າຮຽນມາກ່ອນເພາະຮູ້ດີວ່າເປັນປຶ້ມຮຽນທີ່ເພິ່ນໃຊ້ໃນກະຊວງສຶກສາທິການໃນສມັຍນັ້ນ.

ຫວັງຢ່າງຍິ່ງວ່າ ທ່ານຜູ້ຮູ້ກ່ອນແລະຮູ້ກວ່າຄົງຈະເຂົ້າໃຈແລະພູມໃຈໃນເຈຕນາຣົມຂອງຂ້າພະເຈົ້າ. ຂໍຂອບໃຈທຸກທ່ານທີ່ໃຫ້ການຕິຊົມແລະຊ່ວຍເຫຼືອໃນການຮຽບຮຽງປຶ້ມຫົວນີ້ໃຫ້ເກີດຜົລເປັນຈິງໄດ້.

ດ້ວຍຄວາມນັບຖື,

ໜູ ນິຣາວັນ (ຈໍາປາແດງ)



## *ນະຄອນກະບິລພັດ*

ເປັນຍຸກທີ່ມີຄວາມສຳຄັນທີ່ສຸດໃນປວັດສາດ ຂອງມວນມະນຸສທຸກຫົນທຸກແຫ່ງມີການປ່ຽນແປງ ມີນັກປຣາຊຍ໌ ອາຈານ ມີນັກປຣັຊຍາເກີດຂຶ້ນບໍ່ວ່າຢູ່ໃນເອເຊັຽຕອນກາງ ແລະໃນອິນເດັຽ ຢູ່ປະເທດຈີນກໍມີຄົນດີເກີດຂຶ້ນເຊັ່ນດຽວກັນ.

ໂດຍສະເພາະຢູ່ໃນປະເທດອິນເດັຽຊຶ່ງມີສາສນາພາມເປັນສາສນາປະຈຳຊາຕແລະກາຍເປັນປະເພນີຮີດຄອງທີ່ນັບຖືກັນຢ່າງເຄ່ງຄັດ ສາສນາພາມນັ້ນມີມາກ່ອນແລ້ວປະມານ ໔໐໐໐ ຫາ ໔໕໐໐ ປີ.



ຢູ່ທາງພາກຕາວັນອອກສ່ຽງເຫນືອຂອງປະເທດອິນເດັຽມີເມືອງຫນຶ່ງຊື່ວ່າ "ເມືອງກະບິລພັດ"ເປັນຊື່ເມືອງຫຼວງ ຂອງແຄວ້ນໂກສົນ ປະຊາຊົນຢູ່ແຄວ້ນນີ້ມີເຜົ່າສາກະຍະ. ເຈົ້າຄອງນະຄອນແຄວ້ນໂກສົນນີ້ຊົງພຣະນາມວ່າ ພຣະເຈົ້າ ສຸດໂທທະນະ ມີມະເຫສີຊົງພຣະນາມວ່າ ພຣະນາງສິຣິມະຫາມາຍາ ຫຼື ພຣະນາງມາຍາເທວີ ເປັນກະສັຕແຫ່ງ ໂກຣິຍະວົງ ເປັນຄົນນະຄອນ ເມວະທະຫະ. ປະຊາຊົນເມືອງ ກະບິລະພັດ ມີຊີວິດການເປັນຢູ່ດ້ວຍການເຮັດໄຮ່ໃສ່ນາເປັນຊາວກະສິກອນເກືອບທັງຫມົດ. ພຣະນາງມາຍາເທວີ ບໍ່ເຄີຍມີບຸຕຈັກເທື່ອ ຈຶ່ງພະຍາຍາມວິງວອນອະທິຖານເພື່ອຂໍໃຫ້ມີບຸຕມາເຖິງວັນພະຫັດເດືອນເພັງ (ເດືອນອາສະຫະ) ປີຣະກາ(ປີໄກ່) ພຣະນາງ ມາຍາເທວີ ຊົງສຸບິນ (ຝັນ) ວ່າມີຊ້າງເຜືອກຊູດອກບົວຂາວເຂົ້າໄປ່ໃນພຣະຄັນຂອງພຣະນາງ.

ຫຼັງຈາກນັ້ນ ພຣະນາງກໍ ຖືປະຕິສົນທິຢູ່ໃນຄັນ (ມີທ້ອງ).
ພໍພຣະນາງມາຍາເທວີ ຖືພາທ້ອງໄດ້ ໑໐ ເດືອນແລ້ວ, ຕາມສາສນາພາມພຣະນາງຈະຕ້ອງອອກເດີນທາງຈາກເມືອງກະບິລພັດໄປປະສູຕບຸຕຢູ່ທີ່ບ້ານເມືອງເດີມຂອງຕົນ.



ດັ່ງນັ້ນ ພຣະນາງມາຍາເທວີຈຶ່ງອອກເດີນທາງໄປເຖິງສວນລຸມພິນີ ເຊິ່ງຢູ່ລະຫວ່າງເຂດແດນເມືອງກະບິລພັດກັບເມືອງເທວະທະຫະນັ້ນ ພຣະນາງມາຍາ ກໍເຈັບທ້ອງຄອດບຸຕ ຢູ່ກາງ ສວນລຸມພິນີ ຫຼືສວນສັກສິດ The Sacred Garden ທີ່ມີເນື້ອທີ່ ໕໐ ໄຣ່ພໍດີ. ບຸຕຂອງພຣະນາງມາຍາເທວີປະສູດອອກມາເປັນຊາຍ ມີຮູບໂສມງົດງາມ ພໍເກີດອອກມາໄດ້ ໕ ວັນ ກໍຕັ້ງຊື່ວ່າ ສິດທັດຖະກຸມານ ປະສູດເມື່ອວັນສຸກວັນເພັງເດືອນວິສາຂະ ເດືອນ ໖ ປະ ຈໍ. ເມື່ອພຣະກຸມານ ສິດຖັດທະປະສູຕຈາກຄັນຂອງມາຣດາ ໄດ້ສເດັດດໍາເນີນ (ຍ່າງ) ດ້ວຍພຣະບາທຂອງພຣະອົງ ໗ ກ້າວ ພ້ອມທັງຊົງເປັ່ງພຣະວາຈາວ່າ ພຣະອົງຊົງເປັນຜູ້ປະເສີດ ຊຶ່ງຫມາຍເຖິງເມື່ອຕັດສະຣູ້ແລ້ວ ພຣະອົງຊົງເປັນສາສດາຈາຣເອກຂອງໂລກ ແລະຊົງເຜີຍແຜ່ພຣະສາສນາໄປໄດ້ເຖິງເຈັດແຄວ້ນ.



ເມື່ອພຣະກຸມາປະສູຕໄດ້ ໓ ວັນ ອະສິຕດາບົດ ຊາບຂ່າວວ່າພຣະເຈົ້າສຸດໂທທະນະ ກະສັຕແຫ່ງກຸງກະບິລພັດຊົງມີໂອຣົສໃຫມ່ ຈຶ່ງອອກຈາກອາສົມເທິງເຂົາ ເພື່ອເຂົ້າເຝົ້າພຣະເຈົ້າສຸດໂທທະນະ. ເມື່ອພຣະເຈົ້າສຸດໂທທະນະຊາບ ກໍຊົງດີພຣະທັຍເປັນຍິ່ງ. ພໍດາບົດແລເຫັນແລະພິຈາຣະນາເບິ່ງລັກສນະ



ຂອງມຫາບູຣຸສລັກສນະ ຈຶ່ງເກີດຄວາມເຫຼື້ອມໃສສັທທາວ່າ ເຈົ້າຊາຍສິດທັດທະເປັນຜູ້ມີບຸນປາຣະມີ ຈຶ່ງກົ້ມລົງກາບທີ່ພຣະບາທຂອງເຈົ້າຊາຍ.

ພຣະນາງມາຍາເທວີ ປະສູດເຈົ້າຊາຍສິດທັດຖະມາໄດ້ ໗ ວັນ ພຣະນາງກໍສຸຣຄົຕ (ຕາຍ) ພຣະເຈົ້າສຸດໂທທະນະພຣະບິດາມອບສິດທັດຖະກຸມານໃຫ້ພຣະນາງປະຊາບໍດີໂຄຕະມີ ຊຶ່ງເປັນນ້ອງແມ່ (ນ້າສາວ) ເປັນຜູ້ລ້ຽງດູ. ພຣະເຈົ້າສຸດໂທທະນະໄດ້ເຊີນໂຫນຫຼວງ ພາມ ປະຈຳຣາຊສຳນັກມາທຳນວາຍເບິ່ງລັກສນະຂອງພຣະກຸມານຊຶ່ງມີຄຳທຳນວາຍວ່າ:

໑. ຖ້າພຣະຣາກຸມານຢູ່ຄອງຄາຣະວາດສົມບັດຈະມີອຳນາດວາສນາແລະເປັນພຣະເຈົ້າຈັກກະພັດທີ່ມີຊື່ສຽງລືຊາໄປທົ່ວໂລກາ.

໔. ຖ້າອອກບວດຈະໄດ້ຕັດສະຣູ້ເປັນພຣະສາສດາຈາຣເອກຂອງໂລກ.



ມີໂຫນພາມອີກຜູ້ໜຶ່ງຂໍອະນຸຍາດຖວາຍຄຳທຳນວາຍຂຶ້ນວ່າ "ພຣະຣາຊກຸມານອົງນີ້ຈະໄດ້ອອກບວດແລ້ວຕັດສະຣູ້ເປັນພຣະສາສດາຈາຣເອກຂອງໂລກຢ່າງແນ່ນອນ.

ຈາກຄຳທຳນວາຍຄືແນວນັ້ນໄດ້ເຮັດໃຫ້ພຣະບິດາວິຕົກກັງວົນຍິ່ງໜັກ ເພາະບໍ່ປາຖນາໃຫ້ພຣະໂອຣົສອອກບວດແລ້ວກາຍເປັນເຈົ້າລັດທິຕ່າງໆ ຕາມທີ່ເປັນມາຫຼວງຫຼາຍຢູ່ໃນເວລານີ້. ພຣະບິດາລ້ຽງດູອຸປຖັມໃຫ້ພຣະໂອຣົສມີຄວາມສຸຂທີ່ສຸດດ້ວຍການມີສາວງາມບຳເຣີໃຫ້ຄວາມສຸຂທາງໂລກເຕັມທີ່ທັງໃຫ້ຮ່ຳ



ຮຽນຢ່າງພຽງພໍ ສ້າງຜາສາດຣາຊວັງໃຫ້ປະທັບຢູ່ຕ່າງຫາກ ເລືອກເອົາສາວສນົມກົມມະວັງງາມໆສາວໆມາບົວຣະບັດຂັດສີ ເພື່ອໃຫ້ເພີດເພີນຢູ່ກັບໂລກແຫ່ງຄວາມສຸກນັ້ນ.

ເມື່ອພຣະໂອຣົສ ສິດທັດຖະ ມີພຣະຊົນມາຍຸໄດ້ ໑໖ ປີພໍດີ ແລ້ວ ພຣະບິດາກໍອະພິເສກສົມຣົດໃຫ້ກັບພຣະນາງຂັດຕິຍະ ກຸມາລີຜູ້ຈົບງາມ ມີພຣະນາມວ່າ ພຣະນາງຍະໂສທະລາ ຫຼື ພຣະນາງພິມພາ ເປັນບຸດຂອງພຣະເຈົ້າ ສຸປະພຸດທະແຫ່ງ ເມືອງເທວະທະຫະຊຶ່ງເປັນລູກພີ່ລູກນ້ອງດຽວກັນແລະເປັນ ຊາວ ເຜົ່າໂກຣິຍະ. ເຈົ້າຊາຍສິດທັດຖະ ອະພິເສກສົມຣົດ ກັບພຣະນາງພິມພາໄດ້ ໑໓ ປີ ກໍມີພຣະໂອຣົສໜຶ່ງອົງ ຊົງພຣະນາມວ່າ ຣາຫຸນ.



## *ສເດັດອອກຈາກວັງ*

ຕັ້ງແຕ່ປະສູຕອອກຈົນຮອດພິທີອະພິເສກສົມຣົດ ແລະມີພຣະ ໂອຣົດແລ້ວໜຶ່ງພຣະອົງ ເຈົ້າຊາຍສິທັດຖະ ຍັງບໍ່ເຄີຍສເດັດ ອອກ ໄປນອກວັງຈັກເທື່ອ ມີແຕ່ຢູ່ໃນວັງເພື່ອສຶກສາວິຊາທີ່ ໄດ້ສຶກສາຮ່ຳຮຽນຕອນຊົງພຣະເຍົາກໍແມ່ນດ້ານຍຸທະສາດ ແລະ ການປົກຄອງອັນເປັນຣາຊະປະເພນີຂອງກະສັຕໃນ ສມັຍນັ້ນ.

ຍາມພັກຜ່ອນເຈົ້າສິດທັດຖະມັກຈະໄປພັກຜ່ອນຢ່ອນອາຣົມຢູ່ ຕາມຣາຊອຸທະຍານ ແລະຊົງພໍຝັກໄຝ່ການກິລາຕ່າງໆ.

ໃນທ່າມກາງຄວາມສຸຂອັນເປັນຂອງໂລກີຍະມີ. ເຖິງມີຄວາມ ສຸຂພຽງໃດກໍຕາມ ເຈົ້າຊາຍຍັງຊົງມີດຳຣິຢູ່ສເມີວ່າໂລກນີ້ເຕັມ

ໄປດ້ວຍຄວາມບໍ່ທ່ຽງແທ້ແນ່ນອນ ເຕັມໄປດ້ວຍຄວາມມາຍາ ຄືສິ່ງທີ່ຫຼອກລວງ ຊີວິດຄືຄວາມບໍ່ທ່ຽງ ເປັນພຽງສະຖານທີ່ພັກເຊົາຊົ່ວໄລຍະໜຶ່ງເທົ່ານັ້ນ. ແລ້ວເຈົ້າຊາຍສິດທັດຖະຈຶ່ງຂໍພຣະຣາຊອະນຸຍາດຈາກພຣະບິດາອອກຈາກວັງພ້ອມດ້ວຍນາຍ ສາຣະຖີ ເພື່ອຢາກຮູ້ເຫັນເຣື່ອງຣາວຢູ່ນອກວັງ.

ຕລອດເສັ້ນທາງທີ່ເຈົ້າຊາຍສິດທັດຖະນັ່ງຣົດມ້າພຣະທີ່ນັ່ງຜ່ານໄປໄດ້ພົບເຫັນ ສະພາບຂອງປະຊາຊົນທຸກຍາກ ຫຼາຍລຳບາກເຫັນຄົນເຈັບເປັນ ລົ້ມຕາຍ. ເຫັນຄົນຜິດຖຽງທຸບຕີກັນ ເຫັນຄົນໜຸ່ມສາວງາມ ເຫັນຄົນແກ່ຊະຣາ ເຫັນການທຳພິທີທາງສາສນາຂອງ ພວກໂຍຄີ ຄືຣືສີດາບົດ ທີ່ທໍຣະມານຮ່າງກາຍຂອງຕົນເອງ ຫຼືທຳຣາຍເຖິງແກ່ຊີວິດຂອງຜູ້ອື່ນເພື່ອການໄຫວ້ເຈົ້າເຂົ້າຊີ ແລະ ອື່ນໆ.....



ສິ່ງທີ່ພຣະອົງຊີໄດ້ພົບເຫັນນັ້ນຮຽກວ່າ ເທວະທູຕທັງ ໔ ຄື ຄົນແກ່ ຄົນເຈັບ ຄົນຕາຍ ແລະ ນັກບວດ.

ພໍເຈົ້າຊາຍສິດທັດຖະກັບເຂົ້າສູ່ວັງ ກໍມີການແຫນແຫ່ຕ້ອນຮັບສັລເສີນ ຂອງບັນດາບໍຣິນວົງສານຸວົງ ແລະຂ້າຣາຊບໍຣິວານທີ່ພຣະຣາຊວັງແລະທົ່ວທັງເມືອງ ມີການມະໂຫຣະສົບຄົບຖ້ວນເປັນການສເລີມສລອງເຄື່ອງຜູກມັດເຈົ້າຊາຍສິດທັດຖະໃຫ້ຫຼົງລືມເຣື່ອງຣາວຕ່າງໆທີ່ໄດ້ພົບເຫັນຢູ່ນອກວັງ.

## *ໄດ້ຄຶດເພີ່ມຂຶ້ນອີກ*



ນັບຕັ້ງແຕ່ນັ້ນມາ ເຈົ້າຊາຍສິດທັດຖະ ໄດ້ຄິດເພີ່ມຂຶ້ນອີກ ເມື່ອໄດ້ຊົງພົບເຫັນສະພາບຂອງປະຊາຊົນ ທີ່ທຸກຄົນບໍ່ອາດ ຫຼີກລ້ຽງໄປໄດ້ ເຮັດໃຫ້ພຣະອົງຊົງຮູ້ສຶກອິດເມື່ອຍພຣະທັຍ ເກີດຄວາມເບື່ອຫນ່າຍໂລກສົງສານ ຊົງແນມເຫັນວ່າໂລກນີ້ ກໍາລັງຖືກເຜົາຜານຢູ່ດ້ວຍຄວາມໂລພ ຄວາມໂກດ ແລະ ຄວາມຫຼົງ ພຣະອົງຊົງເກີດຄວາມເມຕຕາໃນສັດໂລກທັງຫຼາຍ ທີ່ມືດມົນຫມົກຫມຸ່ນຢູ່ຢ່າງບໍ່ຮູ້ວ່າໂລກນີ້ຄືກອງໄຟເຜົາຜານ. ເມື່ອຂຸ່ນຄິດຢູ່ຫຼາຍມື້ຕໍ່ຫຼາຍວັນພຣະອົງຈຶ່ງຕັດສິນພຣະທັຍ ຢ່າງເດັດດ່ຽວວ່າຈະຕ້ອງສເດັດອອກຈາກວັງ ເພື່ອສແວງຫາ ໂມຂະທັມ ຄືທັມມະທີ່ຈະຊ່ວຍໃຫ້ພົ້ນອອກຈາກໂລກນີ້.



## *ສເດັດອອກບວດ*

ຕັດສິນພຣະທັຍຢ່າງເດັດຂາດແລ້ວ ພຣະອົງຊົງສເດັດໄປໃນ ຫ້ອງບັນທົມຂອງພຣະຊາຍາ ທອດພຣະເນດໄປໃນຫ້ອງອັນມີ ແສງປຣະທີພສລົ້ວໆ ທອດພຣະເນດເຫັນກຸມານນ້ອຍອັນ ເປັນເລືອດເນື້ອເຊື້ອໄຂ ຂອງພຣະອົງຊົງບັນທົມຫຼັບສນິດຢູ່ ອ້ອມເອິກຂອງພຣະມານດາ ຢາກອູ້ມຂຶ້ນມາຈູບດົມກ່ອນ ຈະອໍາລາຈາກໄປຊໍ້າພັດຢ້ານວ່າ... ເຈົ້າຍິງຍະໂສທະຣາ ຈະ ຕື່ນຈາກບັນທົມຂຶ້ນມາ ແລ້ວຈະທໍາການຂັດຂວາງການອອກ ບັນພະຊາຂອງພຣະອົງ. ເຈົ້າຊາຍຊົງຕັດສິນພຣະທັຍຢ່າງເດັດ ດ່ຽວ ສເດັດໄປຍັງຄອກມ້າ ພົບກັບນາຍ ສັນນາມາດມະ



ຫາດເລັກຄົນສນິດເພື່ອກ່າວເຖິງຈຸດປະສົງໃນການທີ່ຈະອອກຈາກພຣະຣາຊວັງຍາມເດິກດື່ນທ່ຽງຄືນ.

ນາຍສັນນາມາ ເປັນຜູ້ຈູງມ້າຊື່ ກັນຖະກະ ໄຂປະຕູວັງພາເຈົ້າຊາຍສິດທັດຖະອອກຈາກວັງແລ້ວກໍເດີນທາງໄປຫນ້າເລື້ອຍໆຕລອດຄືນ. ໂດຍທົ່ວໄປແລ້ວ ປະເພນີຊາວອິນເດັຽສມັຍໂບຮານ ມັກຈະສລະໂລກີຍະວິສັຍອອກບວດກໍເມື່ອອາຍຸຍ່າງເຂົ້າປູນປັດສິມະວັຍຕາມຫຼັກອາສົມ ໔ ປະການອັນເປັນຄະຕິເປັນປະເພນີນິຍົມຂອງພາມຊຶ່ງແປເປັນຄໍາໂຄງລາວມີໃຈຄວາມວ່າ:

| | |
|---|---|
| ຍາມນ້ອຍສໍານຽງກູ່ | ຮຽນຄຸນ |
| ຄັນໃຫຍ່ຍ່ອມຫາທຶນ | ຊັບໄວ້ |
| ກາງແກ່ສແວງບຸນ | ທ່າຊອບ |
| ຍາມງ່ອມທໍາໃດໄດ້ | ແຕ່ລ້ວນອະນິຈຈັງ |

ຄືນນັ້ນ ເດືອນຈັນວັນເພັງຂອງປີມະເສັງ (ປີງູ) ເຈົ້າຊາຍສິດທັດຖະຊົງປຣະທັບຢູ່ເທິງຫຼັງ ມ້າພຣະທີ່ນັ່ງ ມີທ້າວສັນນາມາດຍ່າງຕາມຫຼັງມ້າຍ່າງບໍ່ຮູ້ອິດຮູ້ເມື່ອຍ ຍ່າງຕາມເຈົ້າຊາຍຢ່າງບໍ່ຮູ້ກົກປາຍສາຍທາງ.



ຕລອດທັງຄືນທີ່ພຣະອົງສເດັດໄປຢູ່ເທິງຫຼັງມ້ານັ້ນ ຂ້ອນແຈ້ງແລ້ວຈຶ່ງໄປເຖິງແມ່ນໍ້າ ເນຣັນຊາຣາ ອັນເປັນ ເຂດຊາຍແດນແຫ່ງອານາຈັກຂອງພຣະອົງ.

ນະທີ່ນັ້ນພຣະອົງໄດ້ຊົງເປື້ອງເຄື່ອງແຫ່ງເຈົ້າຊາຍອອກໃຊ້ພຣະຂັນ (ດາບ) ຊົງພຣະກຸສາ(ຜົມ) ແລ້ວຊົງຜ້າທີ່ຍ້ອມ



ດ້ວຍນໍ້າດ່າງຮຽກເອົາທ້າວສັນນາມາດເຂົ້າມາໃກ້ໆມອບ
ເຄື່ອງຂອງທັງຫມົດໃຫ້ກັນທັງມ້າ ບອກໃຫ້ທ້າວສັນນາມາດ
ນໍາເອົາຄວາມ ແລະ ນໍາເອົາເຄື່ອງຂອງໄປກາບທູນພຣະບິດາ
ໃຫ້ຊົງຊາບວ່າ "ບັດນີ້ເຈົ້າຊາຍສິດທັດຖະໄດ້ຊົງສລະໂລກີ
ຍະວິສັຍເປັນອານາຄະຣິກະບັນພະຊິດ ຜູ້ບໍ່ມີເຮືອນຊານແລ້ວ"
ອັນໄດ້ເຮັດໃຫ້ທ້າວສັນນາມາດໂສກເສົ້າຫງ່ວມເຫງົາ.

ພຣະມາຫາບູຣຸສ ຊົງລູຫຼັງມ້າທີ່ກໍາລັງຈະຈາກກັບເມືອງ ມ້ານໍ້າ
ຕາໄຫຼອາບຫນ້າ ແລ້ວແລບລີ້ນເລັຍພື້ນພຣະບາທຂອງພຣະອົງ
ຜູ້ຊົງເຄີຍເປັນເຈົ້າຂອງ ທັງມ້າທັງຄົນຄືທ້າວ ສັນນາມາດ ນໍ້າຕາ
ອາບຫນ້າ ຂ້າມນໍ້າກັບໄປ ພໍທ້າວສັນນາມາດພ້ອມດ້ວຍມ້າ
ລັບຕາຂອງພຣະອົງ ມ້າກັນທະກະກໍຫົວໃຈແຕກ (ຫົວໃຈວາຍ)
ຕາຍ ແລະ ສ່ວນທ້າວສັນນາມາດ ກໍຮ້ອງໄຫ້ກັບເມືອງຄົນດຽວ.



ເມື່ອທ້າວສັນນາມາດໄດ້ພາມ້າກັບໄປແລ້ວ ເຈົ້າຊາຍສິດທັດ
ຖະ ກໍເປັນຜູ້ມີອິດສຣະພົ້ນຈາກການກ່ຽວພັນໃນທາງໂລກີ.
ຊົງມຸ້ງຫນ້າສແວງຫາສັຈຈະທັມທີ່ພຣະອົງຊົງຕັ້ງພຣະທັຍເອົາ
ແລ້ວນັ້ນ. ບັດນີ້ ນັກບວດສິດທັດຖະໄດ້ພົບຄວາມເປົ່າປ່ຽວ
ດຽວດາຍ ແລະວິເວກວັງເວງເປັນເທື່ອທໍາອິດໃນຊີວິດຢູ່ໃນປ່າ
ດົງຕຶບ ແລະ ໄດ້ພົ້ນຈາກຕໍາແຫນ່ງກະສັດທັງປວງ ພຣະອົງ
ຊົງດໍາເນີນໄປຕາມປ່າດົງ ພໍຕາເວັນທ່ຽງກໍເກີດຄວາມຫິວ
ຈິ່ງກົ້ມລົງກອບພາຍເອົານໍ້າຈາກຫ້ວຍຂຶ້ນມາດື່ມເພື່ອບັນເທົາ
ຄວາມຫິວແລ້ວກໍເດີນທາງຕໍ່. ເປັນເວລາ ໆ ວັນ ໆ ຄືນທີ່
ນັກບວດສິດທັດຖະເດີນຢູ່ໃນປ່າຄົນດຽວ ບໍ່ມີອາຫານກິນ

ນອກຈາກຫມາກໄມ້ແລະນ້ຳ. ພໍລ່ວງເຂົ້າວັນທີ ໗ ກໍມາເຖິງເຂດເມືອງຣາຊຄຶ ແລ້ວກໍຍ່າງຫມູ່ບ້ານໄປ ມີຄົນຕ້ອນຮັບໃນຖານະຣິສີຄືນັກບວດທົ່ວໆໄປ ຊາວບ້ານໄດ້ຖວາຍເຂົ້າປາອາຫານຕາມສັທທາ ແລ້ວນັກບວດສິດທັດຖະ ກໍໄປເຖິງຕີນພູແຫ່ງຫນຶ່ງ ນັ່ງພິຈາຣະນາເບິ່ງອາຫານທັງມີກິ່ນສະເອືອນແລະບໍ່ສະອາດ ຍ້ອນຄວາມບໍ່ເຄີຍບໍຣິໂພຄອາຫານຊນິດນັ້ນພຣະອົງເກີດແຂງຄໍ ພິຈາຣະນາມາດົນນານຄິດໄປເຖິງຄົນບໍຣິຈາກອາຫານ ດ້ວຍຄວາມຍິນດີແລະກໍເປັນອາ ຫານທີ່ດີຂອງເຂົາເລົ່ານັ້ນ. ຖ້າພຣະອົງບໍ່ຕັ້ງຕົ້ນຮູ້ຈັກກັບສິ່ງທີ່ພົບພໍ້ທຳອິດນີ້ເສັຽ ກໍເທົ່າກັບວ່າບໍ່ຮູ້ຈັກຫຍັງອີກ. ໃນຂັ້ນຕໍ່ໄປ...
ແລ້ວພຣະອົງກໍສເວີຍອາຫານນັ້ນໄດ້ຢ່າງສະບາຍ. ໃນວັນຕໍ່ໄປພຣະອົງກໍປະພຶດຕາມເຄີຍ ຖືພາຊະນະໃສ່ອາຫານສະແດງຕົວເປັນຜູ້ຂໍເດີນທາງໄປເລື້ອຍໆ...
ພຣະອົງຊົງສເດັດລົງໄປທາງໃຕ້ ເຂົ້າສູ່ແຄວ້ນມະຄົດໃນນາມນັກບວດ ຜູ້ຊົງສິລ.



## *ເຂົ້າສຶກສານຳອາຈານ*

ນັກບວດສິດທັດຖະ ໄດ້ຊົງເຂົ້າສຶກສານຳອາຈານ ເຈົ້າລັດທິທີ່ລືນາມແຫ່ງຫນຶ່ງທີ່ເຂດພູເຂົາ ວິນທະຍະ ໃກ້ໆກັບແມ່ນ້ຳຄະຍາ. ອາຈານເຈົ້າລັດທິນັ້ນມີຊື່ວ່າ ອາຈານ ອາລາຣະດາ




ບິດ ກາລະມະໂຄຕ. ນັກບວດສິດທັດຖະ ໄດ້ຕັ້ງອົກຕັ້ງໃຈສຶກສາຮ່ຳຮຽນທັງທາງທິສະດີແລະທາງພາກປະຕິບັດຕົວຈິງດ້ວຍການທໍຣະມານຮ່າງກາຍຂອງຕົວເອງ ເພາະເຊື່ອວ່າການທໍຣະມານຮ່າງກາຍຂອງຕົວເອງນັ້ນ ຈະຊ່ວຍໃຫ້ດວງວິນຍານຫຼຸດພົ້ນອອກຈາກກອງທຸກໃນໂລກຫນ້າ ແລະ ບໍ່ດົນພຣະອົງກໍຮຽນຮູ້ເຖິງແກ່ນແທ້ ແຫ່ງລັດທິບຳເພັນຮູບປະທັມໄດ້ເຫນືອກວ່າອາຈານດາຣະດາບົດອີກຊ້ຳ ຈົນອາຈານຂນານນາມໃຫມ່ໃຫ້ວ່າ ພຣະຣືສີສິດທັດຖະ. ອາຈານຍັງມີເຈຕະນາຢາກໃຫ້ຣືສີສິດທັດຖະ ເປັນຜູ້ນຳນັກບວດທັງຫມົດຂອງຕົນແຕ່ຣືສີສິດທັດຖະຍັງບໍ່ທັນພໍພຣະທັຍໃນການສຶກສາຄົ້ນຄວ້າຫາຄວາມຮູ້ທົ່ວໄປ ທັງນຶກຢູ່ໃນພຣະທັຍຂອງພຣະອົງວ່າ "ວິທີນີ້ບໍ່ແມ່ນຫົນທາງນຳໄປສູ່ຄວາມຫຼຸດພົ້ນ" ເຖິງຈະຮຽນຈົບຊັ້ນອາກິມຈັນຍາຍະຕະນະກໍຕາມ. ແລ້ວຣືສີສິດທັດຖະ ກໍລາຈາກອາຈານທີຫນຶ່ງ ເດີນທາງໄປສຶກສາຮ່ຳຮຽນຕໍ່ຈຶ່ງພົບອາຈານຄົນທີສອງຊື່ ອາຈານ ອຸທະກະດາບົດຣາມະບຸຕ ແລະເຂົ້າສຶກສາຮ່ຳຮຽນຈົນຫມົດວິຊາທີ່ໄດ້ນຳອອກມາສອນ ແຕ່ຣືສີສິດທັດຖະກໍຍັງບໍ່ທັນພໍພຣະທັຍທັງຄຶດວ່າບໍ່ແມ່ນຫົນທາງນຳໄປສູ່ການຫຼຸດພົ້ນ ເຖິງຈະຮຽນຈົບຊັ້ນ ເນວະສັນຍານາສັນຍາຍະຕະນະ ກໍຕາມ. ທັງສອງອາຈານ ໄດ້ຍ້ອງຍໍສັລເສີນຣືສີສິດທັດຖະວ່າ ເປັນຜູ້ບຳເພັນພຽນເປັນເລີດ ຍາກທີ່ຈະຫາຜູ້ໃດສເມີເຫມືອນ.



## *ຄົ້ນຄວ້າດ້ວຍພຣະອົງເອງ*

ແລ້ວຣິສິສິດທັດຖະກໍຈາກອາຈາຣຄົນທີສອງເດີນທາງໄປພຣະອົງ ດຽວ ເພື່ອບຳເພັນຊອກຫາວິທີຫຼຸດພົ້ນ.



ເມື່ອເດີນທາງເຂົ້າໄປໃນປ່າທີ່ເຫັນວ່າສງົບດີແລ້ວພຣະອົງກໍນຳ ເອົາວິທີທີ່ໄດ້ຮ່ຳຮຽນມາປະພຶດປະຕິບັດຢູ່ຄົນດຽວ. ພຣະອົງໄດ້ ຊົງໃຊ້ຄວາມພຽນພະຍາຍາມໃນການບຳເພັນທຸກກະລະກິຣິ ຍາຢ່າງຍິ່ງຍວດເກີນກວ່າທີ່ນັກບວດໃນສມັຍນັ້ນຈະທຳກັນໄດ້ ຈົນເປັນເຫດຊັກຈູງໃຫ້ຣິສີອີກ ໕ ຕົນເຂົ້າມາຮ່ວມປະຕິບັດ ດ້ວຍ ທັງຍົກພຣະອົງວ່າ ເປັນແບບຢ່າງທີ່ດີເລີດທັງຍອມຮັບ ເປັນຜູ້ນຳຂອງພວກເຂົາ.

ຣິສີທັງ ໕ ຕົນມີຊື່ວ່າ: ພະອັນຍາໂກນທັນຍະ ພຣະວັປປະ ພຣະພັດທິຍະ ພຣະມາຫານະ ແລະ ພຣະອັດສະຊິ.

ຊຶ່ງຫວັງກັນວ່າເມື່ອການບຳເພັນພຽນຂອງຣິສີສິດທັດຖະ ບັລລຸເພິ່ງຊຶ່ງພຣະສັມມານະໂຄດົມແລ້ວ ກໍຈະສອນພວກຕົນ ໃຫ້ຊາບເຖິງວິທີຈະບັລລຸທັມເຊັ່ນນັ້ນດ້ວຍ.

ຈຶ່ງອຸປຖາກບົວຣະບັດຣິສີສິດທັດຖະເປັນຢ່າງດີ. ຣິສີສິດທັດຖະ ບຳເພັນພຽນດ້ວຍການທໍຣະມານຮ່າງກາຍຈົນເຖິງຂັ້ນບໍ່ສັນອາ ຫານ ທຳໃຫ້ຮ່າງກາຍຈ່ອຍຜອມມີແຕ່ໂຄງຮ່າງກະດູກ ເຮັດ ໃຫ້ປວດສຽນວຽນເກົ້າ ຫາດຂັນທົ່ວຮ່າງກາຍປັ່ນປ່ວນແລ້ວ ລົ້ມສລົບລົງ ຈຶ່ງຊາບໄປເຖິງພຣະອິນທາທິຣາຊ.

ພຣະອິນທາທິຣາຊຈຶ່ງຮີບລົງມາໂດຍແຝງກາຍເຂົ້າມາ ໃຫ້ຮູ້ ພຽງແຕ່ຣິສີສິດທັດຖະ ແລ້ວຊົງດີດພິນສາມສາຍໃຫ້ຟັງ.



ທ້າວໂກສີ (ພຣະອິນ) ໄດ້ດີດພິນໃຫ້ຟັງໂດຍເຄັ່ງສາຍພິນຈົນຂາດ ເມື່ອຂຶ້ນສາຍພິນເທື່ອທີສອງພັດຍານໂພດກໍດີດບໍ່ມີສຽງ ແລ້ວຂຶ້ນສາຍພິນໃຫມ່ໃຫ້ພໍປານກາງແລ້ວພິນກໍດີດມ່ວນນວນຫູ. ຣີສີສິດທັດຖະຈຶ່ງນິດຟັງແລ້ວສຳນຶກໄດ້. ຄືນມາ ພຣະອົງມີຄວາມສຳນຶກໄດ້ວ່າ "ປັນຍາອັນສູງສຸດນັ້ນບໍ່ແມ່ນໄດ້ມາດ້ວຍການທໍຣະມານຮ່າງກາຍ ແຕ່ດ້ວຍການອົບຮົມຈິດໃຈໃຫ້ເປັນສະມາທິ ກຳຈັດຄວາມໂລພ ຄວາມໂກທ ຄວາມຫຼົງ ຕັນຫາ ຣາຄະ ແລະ ອະຣະດີ (ຄວາມຂຶ້ງຄຽດ) ອອກໃຫ້ຊິ້ນເຊີງເທົ່ານັ້ນ. ດວງຈິດຈຶ່ງຈະບັລລຸເຖິງທັມມະຊັ້ນສູງສຸດຄື ໂລກຕະທັມ ອັນຈະນຳໃຫ້ພົ້ນອອກຈາກກອງທຸກຂອງໂລກນີ້ໄດ້". ເມື່ອຄິດໄດ້ດັ່ງນັ້ນແລ້ວ ຣີສີສິດທັດຖະ ຊົງເລີກລະການທໍຣະມານຮ່າງກາຍຢ່າງພວກພາມທັງຫຼາຍກະທຳແລະຊົງປະກາດໃຫ້ສິດສາວົກທັງຫ້າ ປະພຶດປະຕິບັດຕາມເພາະເຫັນວ່າການທີ່ໄດ້ພາກັນປະຕິບັດມາແຕ່ກ່ອນນັ້ນແມ່ນບໍ່ຖືກ ບໍ່ເປັນທາງທີ່ຈະນຳໄປສູ່ຄວາມຫຼຸດພົ້ນໄດ້ເລີຍ. ພຣະອົງຊົງເຫັນວ່າ.... ຖ້າຮ່າງກາຍມີອາຫານຫຼໍ່ລ້ຽງພຽງພໍບໍ່ ໃຫ້ລຳບາກມີສຸຂພາບອັນສົມບູນ ຈິດໃຈກໍປອດໂປ່ງ ຈະໃຊ້ ວິທີການທໍຣະມານຮ່າງກາຍນັ້ນເຫັນວ່າບໍ່ເກີດຜົລເລີຍ.



ໃນເມື່ອຈິດໃຈບໍ່ໄດ້ອົບຮົມໃຫ້ເປັນສະມາທິ ແລະ ກຳຈັດມົນທິນຄວາມເສົ້າຫມອງອອກໄປໄດ້ ຫາກເມື່ອໃດຈິດໃຈຜ່ອງໃສພົ້ນຈາກມົນທິນ ຄືຄວາມໂລພ ຄວາມໂກທ ຄວາມຫຼົງຕັ້ງເປັນ ສະມາທິໄດ້ແລ້ວ ເມື່ອນັ້ນຈຶ່ງຈະພົ້ນຈາກກອງທຸກໄດ້.



ຕລອດ ໔໕໐໐ ປີທີ່ທິສດີທາງສາສນາພາມທີ່ເຊື່ອຖືວ່າ ມີແຕ່ການທໍຣະມານຮ່າງກາຍເທົ່ານັ້ນ ຈື່ງຈະຫຼຸດພົ້ນໄດ້.

ແຕ່ທິສດີຂອງຣີສີສິດທັດຖະ ຊໍ້າພັດບໍ່ເວົ້າຄືແນວນັ້ນ ດັ່ງນັ້ນທິສະດີຂອງຣີສີສິດທັດຖະ ຈື່ງເປັນທິສດີແບບໃຫມ່ ແລະແຕກຕ່າງກັບທີ່ສຸດໃນຍຸກນັ້ນ ຈິນສິດສາວົກທັງ ໕ ຮັບເອົາບໍ່ໄດ້ ພາກັນຄິດວ່າ ຣີສີສິດທັດຖະລະແລ້ວຊຶ່ງຄວາມພຽນຈື່ງພາກັນຫນີຈາກພຣະອົງໄປ.

ເມື່ອສິດສາວົກທັງ ໕ ຈາກໄປແລ້ວຍິ່ງເປັນໂອກາດອັນດີທໍາໃຫ້ຣີສີສິດທັດຖະ ມີ ຄວາມສງົບເພີ່ມຂຶ້ນອີກ.

ພຣະອົງຕັ້ງຫນ້າບໍາເພັນສະມານະທັມຕາມແນວຄິດໃຫມ່ຄືຕັ້ງໃຈໃຫ້ເປັນສະມາທິ ກໍາຈັດມົນທິນຕ່າງອອກທີລະຂັ້ນໆ....

## *ຕັດສະຮູ້ດ້ວຍພຣະອົງເອງ*



ຣີສີສິດທັດຖະຕັ້ງຫນ້າບໍາເພັນສະມານະທັມຕາມແນວຄິດໃຫມ່ຂອງພຣະອົງ ຊຶ່ງນັບມາເຖິງເວລານີ້ກໍເປັນເວລາ ໖ ປີແລ້ວທີ່ພຣະອົງອອກບວດບໍາເພັນພຽນ.

ໃນມື້ທີ່ຣີສີສິດທັດຖະ ຕັດສະຮູ້ນັ້ນໄດ້ມີເຫດການເກີດຂຶ້ນຕອນເຊົ້າ ຄືມີ ນາງສຸຊາດາ ລູກສາວກຸດຸມພີເສດຖີໃຫຍ່ແຫ່ງບ້ານເສນານິຄົມ ຄິດຈະບູຊາບວງສວງເທວະດາ (ແກ້ບະ) ຈື່ງຍົກຖາດເຂົ້າມະທຸປາຍາດ (ເຂົ້າຕົ້ມໃສ່ນໍ້າເຜີ້ງ) ອອກໄປທີ່ຕົ້ນໂພໃຫຍ່ ກໍພໍດີແນມເຫັນພຣະພິຊຸສິດທັດຖະນັ່ງສະມາທິຢູ່ທີ່ໃຕ້ຮົ່ມໂພນັ້ນ ຈື່ງຄິດວ່າ... ແມ່ນເທວະດາປະກົດຮ່າງ



ໃຫ້ເຫັນ. ນາງຈຶ່ງນ້ອມຖວາຍຖາດເຂົ້າມະທຸປາຍາດ. ເມື່ອພຣະອົງຮັບເອົາຖາດເຂົ້າທຸປາຍາດນັ້ນແລ້ວ ພຣະອົງສເດັດໄປທີ່ທ່ານ້ຳ ເນຣັນຊາຣາ ຊົງສເວີຍເຂົ້າມາທຸປາຍາດ ນັ້ນໝົດແລ້ວ ຊົງວາງຖາດລົງໃສ່ນ້ຳ ແລະ ອະທິຖານວ່າຖ້າຈະໄດ້ຕັດສະຣູ້ທັມວິເສດແລ້ວກໍຂໍໃຫ້ຖາດໃບນີ້ລອຍທວນກະແສນ້ຳຂຶ້ນໄປທາງເໜືອ. ພໍປ່ອຍມື ຖາດນັ້ນກໍລອຍທວນກະແສນ້ຳຂຶ້ນໄປທາງເໜືອ ດັ່ງທີ່ໄດ້ອະທິຖານໄວ້ແລ້ວ ກໍຈົມລົງຍັງພື້ນແມ່ນນ້ຳນັ້ນ. ພໍເວລາກາງວັນພຣະອົງໄດ້ ສເດັດປະທັບຢູ່ທີ່ປ່າໄມ້ຮັງໃກ້ແມ່ນ້ຳເນຣັນຊາຣາ.



ພໍໄດ້ເວລາເຢັນຍາມຄ້ອຍຄ່ຳອັສດົງ ພຣະອົງໄດ້ສເດັດປຣະທັບທີ່ກ້ອງກົກໂພ ໃນຂນະທີ່ພຣະອົງກຳລັງສເດັດມາຍັງກົກໂພນັ້ນ ມີ ນາຍໂສດຖິຍະພາມ ເປັນຄົນຫາບຫຍ້າຂາຍຜ່ານມາ ໄດ້ຖວາຍຫຍ້າໃຫ້ແກ່ພຣະອົງ ໆ ກໍາເພື່ອເອົາປູຮອງນັ່ງ. ພຣະອົງຮັບເອົາຫຍ້າຄາແລ້ວປູຈາກນັ້ນກໍຂຶ້ນນັ່ງດ້ວຍການເອົາຂາຂວາເຕັ່ງຂາຊ້າຍ ຕັ້ງກາຍໃຫ້ຕົງ ເອົາມືຂວາເຕັ່ງມືຊ້າຍ ເອົາຫົວແມ່ມື (ໂປ້ມື) ທັງສອງຈຸກັນຫງາຍຝາມືທັງສອງວາງໄວ້ບົນຕັກ ຫັນໜ້າປທາງທິດຕາວັນອອກ ເອົາພຣະປີສະດາງ (ຫຼັງ) ອີງກົກໂພ.

ໃນຄືນທີ່ຣີສີສິດທັດຖະຈະຕັດສະຣູ້ນັ້ນປະກົດມີສຽງຊູ່ເຂັ່ນຂອງດິນຟ້າອາກາດ ສຽງເຜດພີດັງຟົດສະນັ່ນຝັ່ນເຟືອນເໜືອຟ້າຈະຖລົ່ມ ດິນຈະທະລາຍ. ມີພຣະຍາມານໝາຍປອງຈະເອົາຊີວິດຂອງພຣະອົງແລະມີສຽງຂັບໄລ່ອັນໂກທຮ້າຍແລະ



ໂທຍທວນ ແຕ່ພຣະອົງກໍ່ບໍ່ຍອມເບີກພຣະເນຕ ໄດ້ແຕ່ສງົບ ຈິດໃຈນິ້ງເສີຍ ເຮັດຄືບໍ່ໄດ້ຍິນສິ່ງໃດທັງຫມົດ ແລ້ວສຽງເຫຼົ່ານັ້ນກໍ່ຄ່ອຍໆຈາງຫາຍໄປ. ຄືນນັ້ນ ເປັນຄືນເດືອນເພັງ ເດືອນວິສາຂະ ຂນະທີ່ພຣະອົງຊົງນັ່ງບໍາເພັນຍານຢູ່ນັ້ນ ກໍຊົງບັລລຸບຸບເພນິວາດສະນຸສະຕິຍານ ຄືຍານຣະລຶກຊາຕຫົນຫຼັງໄດ້ເປັນອັນດັບທໍາອິດ. ຕໍ່ມາກໍບັລລຸເຖິງຂັ້ນ ຈຸຕູປປາຕະຍານ ຄືຍານພິຈາຣະນາເຫັນສັດທັງຫຼາຍວຽນວ່າຍຕາຍເກີດດ້ວຍອໍານາດແຫ່ງກັມ ແລະ ຂັ້ນຕໍ່ມາອີກ ກໍບັລລຸອາສະວັກຂະຍານ ຄືຍານທີ່ຢັ່ງຮູ້ວ່າຊິ້ນອາສະວະແລ້ວ ຈຶ່ງເຮັດໃຫ້ພຣະອົງຊາບວ່າ ພຣະອົງຊິ້ນພົບ ຊິ້ນຊາຕແລ້ວ ບໍ່ຕ້ອງວຽນວ່າຍຕາຍເກີດຮັບທຸກຕໍ່ໄປອີກ ຊຶ່ງເປັນອັນວ່າ ໄດ້ບັລລຸພະນິພພານອັນເປັນທີ່ຊິ້ນສຸດທຸກແລະເປັນຈຸດມຸ້ງຫມາຍປາຍທາງໃນການປະຕິດບັດທັມຂອງພຣະອົງ.



ຫຼັກທັມແຫ່ງຄວາມຮູ້ທີ່ພຣະອົງຊົງຄົ້ນພົບທໍາອິດນັ້ນຮຽກວ່າ "ອະຣິຍະສັຈຈະທັມທັງ ໔ ກໍຄືຫຼັກທັມແຫ່ງຄວາມຈິງອັນປະເສີດທັງ ໔ ປະການ ຫຼື ອະຣິຍະສັຈສີ່ ອັນມີຄື: ທຸກ ສມຸທັຍ ນິໂຣສ ແລະ ມັຄຄະ.

ພຣະອົງຊົງຕັດສະຣູ້ແລ້ວໃນວັນພຸທ ເດືອນເພັງເດືອນວິສາຂະ ປີຣະກາ (ປີໄກ່).

ພຣະອົງຊົງອຸທານສແດງຄວາມປີຕິໂສມານັດ ໃນຜົລສໍາເຣັດອັນໃຫຍ່ຫຼວງນັ້ນວ່າ:

ອເນກຊາຕິ ສໍຣາຣໍ ສນຸນທວິສຸສໍ ອນິພຸພິສໍ



ຄຫກາຣໍ ຄເວສນຸໂຕ ທຸກຸຂາ ຊາຕິ ປຸນປຸນຸໍ

ຄຫກາຣກ ທິຖະໂຖສິ ປນຸ ເຄຫໍ ນ ກາຫສິ

ສພຸພາ ເຕເຕຍາສຸກາ ພຄຸຄາ ຄຫກູ ວິສງູຂຕໍ

ວິສງຸຂາຣຄຕໍ ສິຕຸຕໍ ຕຫນຸຫານໍ ຂຍມຊຸຊຄາ

ແປວ່າ:

ເມື່ອເຮົາຄົ້ນພົບຫານາຍຊ່າງຄືຕັນຫາຜູ້ສ້າງເຮືອນ ຄືອັຕຕະພາບນີ້ຍັງບໍ່ພົບ ຈຶ່ງຕ້ອງທ່ອງທ່ຽວວຽນວ່າຍຕາຍເກີດນັບດ້ວຍອະເນກຊາຕ. ການເກີດທຳໃຫ້ເປັນທຸກຢູ່ເລື້ອຍໄປ. ດູກ່ອນຕັນຫາຜູ້ເປັນດັ່ງນາຍຊ່າງຜູ້ສ້າງເຮືອນ ຄືອັດຕະພາບ. ບັດນີ້ ເຮົາໄດ້ພົບຕົວທ່ານແລ້ວທ່ານຈະສ້າງເຮືອນຄືອັດຕະພາບ ຕໍ່ໄປບໍ່ໄດ້ອີກແລ້ວ. ເຄື່ອງເຮືອນຂອງທ່ານທັງຫມົດ (ຄືຕັນຫາ ມານະ ທິຕຖິ) ເຮົາໄດ້ທຳລາຍຫມົດແລ້ວ ແລະຍອດເຮືອນ (ອະວິຊາ) ເຮົາກໍໄດ້ຮື້ລົງມາແລ້ວ.

ຈິດເຖິງພາວະປັສຈາກການປຸງແຕ່ງ ບັລລຸເຖິງຄວາມຊິ້ນຕັນຫາທັງຫຼາຍແລ້ວ.

ເມື່ອພຣະອົງໄດ້ຕັດສະຣູ້ແລ້ວ ພຣະອົງຈຶ່ງມີຊື່ໃຫມ່ວ່າ (ພຸທ) ແປວ່າ ຜູ້ຕັດສະຣູ ຜູ້ຕື່ນຈາກກິເລສ.



ຂນະນີ້ພຣະອົງມີພຣະຊົນມາຍຸໄດ້ ໓໕ ພັນສາ ກ່ອນພຸທສັກກະຣາຊ ໔໕ ປີ ແລະກ່ອນຄຣິຕສັກກະຣາຊ ໕໘໘ ປີ.

## *ປະທັບຢູ່ທີ່ເກົ່າ ໗ ອາທິດ*



ຫຼັງຈາກພຣະອົງໄດ້ຕັດສະຣູ້ເປັນພຸທໂຄຕະມະແລ້ວ ພຣະອົງຍັງໄດ້ປະທັບຢູ່ທີ່ເກົ່ານັ້ນ ໆ ອາທິດຫຼື ໔໙ ວັນ ເພື່ອໃຊ້ເວລາເຫຼົ່ານັ້ນພິຈາຣະນາທົບທວນປະຕິດຈະສະມຸປປາດ ແລະ ສເວີຍວິມຸດຕິສຸຂ ຄືຄວາມສຸຂທີ່ໄດ້ຮັບຈາກການຕັດສະຣູ້ນັ້ນ.
ແລ້ວພຣະອົງກໍນ້ອມດວງຈິດໄປໃນການຂິນຂວາຍ ຍ້ອນບໍ່ປະສົງຈະເປີດເຜີຍທັມທີ່ພຣະອົງໄດ້ຄົ້ນພົບ ອັນມີຄວາມສໍາຄັນຍິ່ງແກ່ຊາວໂລກ. ດ້ວຍຊົງພິຈາຣະນາເຫັນວ່າ ຍາກທີ່ຈະຫາບຸຄຄົນທີ່ສລາດເຖິງຂນາດເຂົ້າໃຈທັມອັນເລີກເຊິ່ງນີ້ໄດ້ ຫາກຊົງສແດງທັມແກ່ບຸຄຄົນທົ່ວໄປ ກໍອາດຈະເປັນການຫາຄວາມລໍາບາກມາໃຫ້ແກ່ພຣະອົງ ໂດຍເປົ່າປໂຍດ ເມື່ອຍແຮງລ້າໆ ເພາະຜູ້ຟັງໆແລ້ວບໍ່ເຂົ້າໃຈ ບໍ່ອາດທີ່ຈະບັລລຸຫມາກຜົລຕາມພຣະອົງໄດ້.



ເມື່ອພຣະພຸທໂຄຕະມະໄດ້ທົບທວນຢູ່ໄປມາ ຈຶ່ງຄິດໄດ້ອີກວ່າ ເມື່ອອິດທົນພາກພຽນຈົນບັລລຸດັ່ງນີ້ແລ້ວ ຈະບໍ່ເຜີຍແຜ່ນັ້ນ ເຫັນວ່າຂາດເຫດຜົລແຕ່ຈະເລີ່ມເຜີຍແຜ່ກັບຄົນສ່ວນນ້ອຍໄປເຖິງຄົນສ່ວນຫຼາຍ.
ແລ້ວພຣະອົງກໍຊົງຄິດເຖິງພຣະອາຈາຣທັງສອງຄື: ອາຈາຣອາລາຣະດາບົດກາຣາມະໂຄຕ ແລະ ອາຈາຣ ອຸທະກະດາບົດຣາມະບຸຕ ເພາະທ່ານດາບົດທັງສອງເຄີຍເປັນອາຈາຣຂອງພຣະອົງມາກ່ອນ. ແຕ່ເປັນຫນ້າເສັຽດາຍເມື່ອພຣະອົງຫວນສົ່ງກະແສຈິດໄປເຖິງ ອາຈາຣທັງສອງ ກໍຮູ້ວ່າອາຈາຣທັງສອງໄດ້ເຖິງແກ່ກັມໄປແລ້ວ. ອາຈາຣຄົນທໍາອິດເຖິງແກ່



ກັມແລ້ວ ໆ ວັນແລະອາຈານຄົນທີສອງຫາກໍ່ຈະເຖິງແກ່ກັມວານນີ້ເອງ.

ເມື່ອຮູ້ວ່າອາຈານທັງສອງໄດ້ເຖິງແກ່ກັມແລ້ວ ພຣະອົງກໍຫວນຣະລຶກເຖິງປັນຈະວັຄຄີຣືສີທັງ ໕ ຊຶ່ງເຄີຍເປັນສະຫາຍຮ່ວມປະຕິບັດທັມດ້ວຍກັນ ໃນຄາວບຳເພັນທຸກກະຣະກິຣິຍາ.

ຄິດໄດ້ດັ່ງນັ້ນແລ້ວ ພຣະອົງຈຶ່ງໄດ້ຕັດສິນພຣະທັຍເພື່ອຊົງເທສນາກັນທຳອິດ ຊຶ່ງເປັນຂອງຂວັນອັນປະເສີດແກ່ພຣະເຈົ້າສຸດໂທທະນະ ພຣະບິດາຂອງພຣະອົງ ຫຼື ແກ່ພຣະນາງມະຫາປະຊາບໍດີ ພຣະມາດາລ້ຽງຂອງພຣະອົງ ຫຼືແກ່ພຣະນາງຍະໂສທະຣາ ພຣະຊາຍາຂອງພຣະອົງ ຫຼືແກ່ພຣະຍາຕິວົງອື່ນໆ...

ດ້ວຍທິພຈັກສຸ ພຣະອົງຊົງຊາບທີ່ຢູ່ຂອງຣືສີທັງ ໕ ຂນະນີ້ຣືສີທັງ ໕ ຕົນຢູ່ທີ່ປ່າອິສີ ປະຕະນະຄະທາຍະ ໃກ້ເມືອງພຣະຣານະສີ.

## *ຣະຫວ່າງການເດີນທາງ*

ພໍຄົບກຳນົດ ໔໙ ວັນແລ້ວ ພຣະອົງກໍຊົງສເດັດເດີນທາງດ້ວຍພຣະອົງດຽວເພື່ອໄປພົບຣືສີທັງ ໕ ທີ່ປ່າອິສີປະຕະນະມິຄະທາຍະ ຊຶ່ງມີໄລຍະທາງປະມານ ໔໐໐ ກິໂລແມັດ. ຣະຫວ່າງການເດີນທາງນັ້ນ ພຣະອົງໄດ້ພົບອາຊີວົກຄົນໜຶ່ງ ຊື່ວ່າ ອຸປະກະ ເປັນນັກບວດປະເພດຊີເປືອຍໃນລັດທິຂອງຂະລິໂຄສານ ຊຶ່ງມີການປະຕິປະທາບາງຢ່າງເຄັ່ງຄັດຫຼາຍ ເຊັ່ນ:



ບໍ່ກິນອາຫານປະເພດເນື້ອ ປາ ແລະ ສຸຣາຢາເມົາ ສ່ວນອາຫານອື່ນໆທີ່ບໍ່ຫ້າມ ແຕ່ກໍກິນແຕ່ພຽງເລັກນ້ອຍ.

ອຸປະກະທັກທາຍພຣະພຸທເຈົ້າວ່າ: ອິນຊີຂອງທ່ານງາມຫຼາຍ ຜິວພັນຜຸດຜ່ອງຫນ້າເຫຼື້ອມໄສ ທ່ານສລະໂລກອອກບວດອຸທິສແກ່ໃຜ? ໃຜເປັນອາຈາຣຂອງທ່ານ? ທ່ານຊອບໃນຫຼັກທັມຄໍາສອນຂອງໃຜ?

ພຣະພຸທເຈົ້າຊົງຕອບໄປວ່າ:

ເຮົາເປັນຊນະທຸກຢ່າງ ເປັນຜູ້ຮູ້ທຸກຢ່າງ ເປັນຜູ້ສລະໄດ້ທຸກຢ່າງ ແລະ ສລະໄດ້ຢ່າງເດັດຂາດ ໂດຍບໍ່ເຂົ້າໄປພົວພັນອີກ ເພາະມັນເປັນຕັນຫາດັບໄປໂດຍຊິ້ນເຊີງ. ເຮົາຈຶ່ງເປັນຜູ້ທີ່ຫຼຸດພົ້ນຈາກທຸກຢ່າງ. ເຮົາຕັດສະຣູ້ໂດຍຕົນເອງ ຈຶ່ງບໍ່ມີໃຜທີ່ເຮົາຄວນຮຽກວ່າເປັນຄຣູເປັນອາຈາຣເຮົາໃນເຣື່ອງການຕັດສະຣູ້ນີ້. ເຮົາບໍ່ມີຄຣູ ບໍ່ມີອາຈາຣ ແລະ ບໍ່ມີໃຜສເມີເຫມືອນເຮົາ ບໍ່ມີໃຜເທົ່າທຽມເຮົາໃນໂລກນີ້ ພ້ອມທັງເທວະໂລກ ເຮົາເປັນພຣະອໍຣະຫັນເປັນສາສດາທີ່ບໍ່ມີຜູ້ໃດເຫນືອກວ່າ ເຮົາເປັນພຣະສັມມາສັມພຸທເຈົ້າ ຜູ້ມີໄຟຣາຄະອັນເຢັນ ແລະດັບມອດແລ້ວເຮົາກໍາລັງເດີນທາງໄປແຄວ້ນກາສີ ເພື່ອປະກາດທັມມະຈັກ ບັລລັງກ໌ອງ ອະມະຕະທັມ ເປີດປະຕູໂລກນີ້ ຊຶ່ງຖືກຄວາມປົກປິດໄວ້ໃຫ້ຮັບແຕ່ຄວາມສວ່າງ.

ອຸປະກະ ບໍ່ເຊື່ອຄໍາເວົ້າຂອງພຣະພຸທເຈົ້າດ້ວຍການສັ່ນຫົວແລ້ວເວົ້າວ່າ ຖ້າເປັນຄືແນວນັ້ນທ່ານກໍຄວນເປັນພຣະອະນັນຕະຕິ ຜູ້ຊນະຢ່າງຫາທີ່ສຸດບໍ່ໄດ້ອີກແລ້ວຂ້ອຍກໍຢາກໃຫ້ເປັນ

ຢ່າງນັ້ນຄືກັນທັ້ນລະ ແລ້ວມັນກໍແລບລີ້ນເປັນການຫຼອກລໍ້ກ່ອນຈະແຍກທາງໜີໄປ.




ທຸກຄົນທີ່ໄດ້ພົບກັບພຣະພຸທເຈົ້າ ນັບວ່າເປັນຄົນມີບຸນທີ່ທຳໄວ້ແລ້ວໃນອະດີດ ເຖິງວ່າມີບາງຄົນບໍ່ໄດ້ບັລລຸໜມາກຜົລ ແຕ່ກໍໄດ້ອຸປະນິສັຍຕິດຕົວ ເປັນປັຈຈັຍແຫ່ງໜມາກຜົລ ນິພພານໃນອະນາຄົຕ ເຊັ່ນອຸປະກະອະຊີວົກຜູ້ນີ້ຕົວຢ່າງ. ເມື່ອແຍກທາງຈາກພຣະພຸທເຈົ້າແລ້ວ ກໍເດີນທາງໄປອາສັຍຢູ່ກັບພານປ່າຜູ້ທີ່ເຄົາຣົບນັບຖືຕົນ ຢູ່ທີ່ໜູ່ບ້ານຊາວປ່າ ຊື່ ວັງກະຫາຣະ ຕໍ່ມາອຸປະກະຄິດມັກລູກສາວນາຍພານ ຈຶ່ງສລະເພດອອກມາຂໍລູກສາວນານພານຜູ້ອຸປຖຳບຳລຸງຕົນນັ້ນເປັນພັລຍາ ຊຶ່ງນາຍພານກໍຍອມໃຫ້ດ້ວຍຄວາມນັບຖື ແລະມອບໜ້າທີ່ໃຫ້ອຸປະກະ ຫາບເນື້ອໄປຂາຍ.

ຕໍ່ມາ ນາງຈາປາ ຄອດລູກອອກມາເປັນຊາຍຊື່ວ່າ ສຸພັດທະ ເມື່ອລູກຮ້ອງໄຫ້ ນາງກໍມັກຈະເວົ້າກະທົບກະແທກໄປເຖິງພໍ່ຂອງເດັກວ່າ ເປັນລູກອີ່ຕາຊີເປືອຍ ຊຶ່ງເປັນຄົນທີ່ຫາສິລປະໃນການຄອງຊີພບໍ່ໄດ້ເລີຍ. ອຸປະກະໄດ້ຍິນເລື້ອຍໆ ກໍເຈັບໃຈທັງນຶກອັບອາຍ ແລະຫວນຣະລຶກເຖິງບຸຄຄົນໜຶ່ງທີ່ຕົນໄດ້ພົບປະສົບທະນາດ້ວຍ ແລະຂນານນາມຕົນເອງວ່າ ອະນັນຕະຊິນະ ຜູ້ທີ່ມີລັກສນະຣັສມີສີສັນ ແລະ ມີກິຣິຍາໜ້າເຫຼື້ອມໄສຍິ່ງໜັກ ໜ້າຈະຍຶດເປັນທີ່ເພິ່ງ ຈຶ່ງຄິດທີ່ຈະກອບກູ້ສັກສີຂອງຕົນກັບມາອີກຄັ້ງ ເມື່ອພັລຍາດູໜິ່ນໜັກເຂົ້າ ແລະຊາບວ່າມີບຸຄຄົນມີລັກສນະດັ່ງເຊັ່ນທີ່ຕົນເຄີຍພົບປະສົບ

ທະນາດ້ວຍນັ້ນຢູ່ທີ່ ເມືອງສາວັດຖີ ຈຶ່ງໄດ້ສລະພັລຍາ ແລະ ບຸຕເດີນທາງໄປເມືອງສາວັດຖີ ແລ້ວຖາມຫາອະນັນຕະຊີນະ ພຣະພຸທເຈົ້າຊົງຊາບ ຈຶ່ງນຳຕົວເຂົ້າມາເຝົ້າ ຊົງປະທານບັນພະຊາອຸປະສົມບົດໃຫ້ເປັນພຣະພິຊຸ ແລະ ໄດ້ກາຍເປັນພຣະອໍຣະຫັນ.



## *ພຣະພຸທເຈົ້າພົບຣືສີທັງ ໕*

ທີ່ປ່າ ອິສີປະຕະນະມິຄະທາຍວັນ ເປັນສູນກາງບຳເພັນພົດຂອງພວກຣືສີຜູ້ສລະໂລກີວິສັຍ ອອກສແວງຫາສັຈຈະທັມ ອິສີປະຕະນະ ແປວ່າ ທີ່ປະຊຸມຂອງພວກຣືສີ ແລະ ມິຄະທາຍວັນ ແປວ່າ ປ່າເປັນທີ່ໃຫ້ອະພັຍແກ່ເນື້ອ ຄືບໍ່ມີການລ່າເນື້ອ ຫຼືຂ້າສັດໃນບໍຣິເວນນັ້ນ. ທຳອິດນັ້ນ ພໍແຕ່ແນມເຫັນພຣະພຸທເຈົ້າສເດັດມາແຕ່ໄກ ຣືສີທັງ ໕ ຕົກລົງກັນວ່າ ຈະບໍ່ຕ້ອນຮັບ ພໍແຕ່ພຣະພຸທເຈົ້າສເດັດເຂົ້າມາໃກ້ໆ ຕ່າງກໍລືມຂໍ້ຕົກລົງໄດ້ໃຫ້ໄດ້ແກ່ກັນ ພາກັນລຸກຂຶ້ນຍິນດີຕ້ອນຮັບ ເຊື້ອເຊີນໃຫ້ນັ່ງເທິງທີ່ນັ່ງຂອງພວກຕົນດ້ວຍຄວາມເຄົາຣົບທີ່ເຄີຍມາແຕ່ກ່ອນ. ແຕ່ໄດ້ໃຊ້ຄຳທັກທາຍຂຶ້ນຕົ້ນດ້ວຍຄຳອັນບໍ່ເຫມາະສົມປານໃດ ຊຶ່ງສະແດງວ່າພວກເຂົາຍັງບໍ່ທັນຍອມຮັບວ່າ ພຣະພຸທເຈົ້າໄດ້ຕັດສະຣູ້ແລ້ວ.

ຣືສີທັງ ໕ ໃຊ້ຄຳທັກທາຍພຣະພຸທເຈົ້າທີ່ຂຶ້ນຕົ້ນດ້ວຍຄຳທີ່ວ່າ "ອາວຸໂສ ໂຄຕະມະ" ຊຶ່ງແປເປັນພາສາລາວເຮົາວ່າ "ທ່ານໂຄຕະມະ" ອັນເປັນຄຳບໍ່ສົມຄວນເລີຍ ແລ້ວພຣະພຸທເຈົ້າຊົງ



ຕອບວ່າ ຜູ້ມີອາຍຸທັງຫຼາຍ ຢ່າໄດ້ທັກທາຍພຣະພຸທເຈົ້າດ້ວຍ ຄຳເວົ້າ ອາວຸໂສໂຄຕະມະ ດັ່ງນັ້ນເລີຍ ເພາະວ່າເຮົາຕະຖາຄົຕ ໄດ້ບັລລຸອະນຸຕະຕມາສັມມາສັມໂພທິຍານແລ້ວ ນະ ກ້ອງຕົ້ນໂພແຫ່ງອຸຣຸເວລາເສນານິຄົມ ບັດນີ້ເຮົາເປັນ ພຣະອໍຣະຫັນຕະສັມມາສັມພຸທເຈົ້າ ໂດຍສົມບູນແລ້ວ.

ຣີສີທັງ ໕ ບໍ່ທັນເຊື່ອແລະຕອບໂຕ້ວ່າ: ທ່ານຈະບັລລຸຄຸນພິເສດເຫຼົ່ານັ້ນໄດ້ຢ່າງໃດ ໃນເມື່ອທ່ານໄດ້ເລີກລະການທໍຣະມານຕົນ ຄາຍຄວາມພຽນວຽນມາເປັນຄົນມັກຫຼາຍເສັຽແລ້ວ ຫັນເຂົ້າດຳເນີນຊີວິດອັນຕ່ຳຕ້ອຍດ້ວຍຄຸນຄ່າດັ່ງຊາວໂລກທີ່ເປັນຄະຣືຫັດໂດຍທົ່ວໄປ.

ພຣະພຸທເຈົ້າຊົງຕອບວ່າ ທ່ານທັງຫຼາຍເຄີຍໄດ້ຍິນໄດ້ຟັງຕະຖາຄົຕກ່າວຄຳເຊັ່ນນີ້ມາກ່ອນບໍ? ວ່າເຮົາໄດ້ປະຕິຍານຕົນເປັນພຣະອໍຣະຫັນຕະສັມມາສັມພຸທເຈົ້າແລ້ວ? ສະນັ້ນ ທ່ານທັງຫຼາຍຈົ່ງເຊື່ອໃນສັມມາສັມໂພທິຍານທີ່ເຮົາບັລລຸແລ້ວນີ້ ເຖີດ ແລະຈົ່ງພະຍາຍາມປະຕິບັດຕາມບໍ່ຊ້າບໍ່ນານກໍຈະບັລລຸໂພທິຍານເຊັ່ນນັ້ນ ເປັນພຣະພຸທເຈົ້າຜູ້ຕື່ນຈາກກິເລສຢ່າງສົມບູນ.



ຣີສີທັງ ໕ ຕົນຫວນຣະລຶກເຖິງຄວາມຫຼັງ ຄັ້ງປະຕິບັດທັມຮ່ວມກັນວ່າ ພຣະສັມມານະໂຄດົມຜູ້ນີ້ບໍ່ເຄີຍເວົ້າຕົວະຈັກເທື່ອເລີຍ ເມື່ອພຣະພຸທເຈົ້າຊົງເວົ້າຄຳດຽວເຖິງ ໔-໖ ເທື່ອກໍຈູງໃຈໃຫ້ຣືສີທັງ ໕ ເຊື່ອໝັ້ນວ່າ ພຣະອົງຕັດສະຣູ້ແລ້ວ ຍອມເຊື່ອພ້ອມທີ່ຈະຟັງທັມມະເທສນາຕໍ່ໄປ.



## *ຟັງທັມມະເທສນາກັນທຳອິດ*

ເລີ່ມຈາກຣືສີທັງ ໕ ຕົນ ພຣະພຸທເຈົ້າໄດ້ເທສນາກັນທຳອິດ ມີຫົວຂໍ້ວ່າ "ທັມມະຈັກ ກັບປວັດຕະນະສູຕ" ກໍຄືຫຼັກຖານ ຫົວຂໍ້ແຫ່ງພຣະທັມ ຄືການໝຸນວົງລໍ້ແຫ່ງພຣະທັມ.

ພຣະພຸທເຈົ້າ ຊົງເທສນາແບ່ງອອກເປັນ ໔ ຕອນຄື:

ຕອນທີ ໑: ພຣະອົງຊົງຊີ້ໃຫ້ເຫັນຫົນທາງປະຕິບັດອັນຢູ່ ດ້ານຂອບສຸດ ໔ ທາງໄດ້ແກ່ການມຸກມົ້ວພົວພັນຢູ່ກັບ ກາມສຸຂ ແລະ ການທໍຣະມານຕົວເອງໃຫ້ລຳບາກ ຊຶ່ງບໍ່ແມ່ນທາງ ທີ່ບັນພະຊິດຜູ້ສລະ ອອກບວດສແວງຫາສັຈຈະທັມ.

ຕອນທີ ໔: ພຣະອົງຊົງໄດ້ສະແດງເຖິງສາຣັຕຕະຖະສຳຄັນທີ່ ຊົງຄົ້ນພົບແລະຕັດສະຣູ້ດ້ວຍພຣະອົງເອງ ຄື ສາຍກາງແຫ່ງ ອາຣິຍະສັຈສີ່ ຫຼື ອາຣິຍະສັຈຈະທັມທັງສີ່ ຄື ທຸກ ສະມຸທັຍ ນິໂຣສ ແລະ ມັກຄະ.

ຫ່າງຈາກມື້ສະແດງທັມມະເທສນາ ກັນທຳອິດພຽງ ໕ ວັນ ພຣະພຸທເຈົ້າຊົງສະແດງທັມມະເທສນາກັນທີ ໔ ເອີ້ນວ່າ "ອະນັຕລັກຂນະສູຕ". ໄດ້ເຮັດໃຫ້ຣືສີທັງ ໕ ບັລລຸອໍຣະ ຫັນແລະ ໃນວັນນັ້ນ ໄດ້ມີພຣະອໍຣະຫັນເປັນສາວົກຂອງພຣະ ພຸທເຈົ້າເທື່ອທຳອິດພ້ອມກັນ ໕ ອົງເກີດຂຶ້ນໃນໂລກ.

ພໍແຕ່ພຣະພຸທເຈົ້າ ຊົງສແດງທັມມະເທສນາໂຜດສາວົກທັງ ໕ ແລ້ວ ກໍເຂົ້າສູ່ຣະດູຝົນຂອງເດືອນ ໗ ພໍດີ.





ພຣະພຸທເຈົ້າ ແລະ ສາວົກທັງ ໕ ຈຶ່ງພັກຈຳວັດສາຢູ່ນະທີ່ປ່າ ອິສິປະຕະນະມິຄະທາຍະ ນັ້ນ.

ໃນວັດສາທີໜຶ່ງນັ້ນ ພຣະອົງໄດ້ມີສາວົກເພີ່ມຂຶ້ນ ໖໐ ຮູບ ແລະໃນວັດສາທີສອງ ນະທີ່ນະຄອນສາວັດຖີ ໄດ້ມີສາວົກ ເປັນພຣະອໍຣະຫັນ ໑໔໕໐ ຮູບທີ່ມາໂຮມຊຸມນຸມຢ່າງບໍ່ໄດ້ນັດ ໝາຍ ດ້ວຍສັທທາເຫຼື້ອມໃສ ພຣະພຸທສາສນາ ແລະ ໄດ້ມີຜູ້ ອອກບວດ ເພີ່ມຂຶ້ນເລື້ອຍໆ.

ຕໍ່ມາກໍມີນັກບວດເຖິງ ແປດໝື່ນຄົນ.

ພຸທກິຈຂອງພຣະພຸທເຈົ້າ ໄດ້ດຳເນີນ ໄປຢ່າງຕໍ່ເນື່ອງຈົນຄົບ ໔໕ ພັນສາ ພຣະອົງກໍໄດ້ມີພຣະຊົນມາຍຸ ໘໐ ພັນສາພໍດີ.

ພັນສາທີ ໔໕ ນະທີ່ບ້ານເວສຸວະຄາມ ນະຄອນເວສາລີ.

ກ່ອນພຣະພຸທເຈົ້າຈະປະຣິນິພພານ ພຣະອົງໄດ້ຮຽກເອົາພຣະ ອານົນເຂົ້າມາໃກ້ໆແລ້ວຕັດວ່າ:



ດູກ່ອນອານົນ... ພວກເຈົ້າອາດມີຄວາມເຫັນໄປ ໃນທຳນອງ ວ່າປະພຶດຄືພຣະທັມມະວິນັຍ ລ່ວງໄປພ້ອມກັບສາສດາ. ບັດນີ້ ພວກເຮົາບໍ່ມີສາສດາແລ້ວ ອັນທີ່ຈິງນັ້ນ ບໍ່ຄວນມີຄວາມຄິດ ເຫັນຢ່າງນັ້ນ.

ດູກ່ອນອານົນ.... ທັມທີ່ເຮົາສແດງໄວ້ແລ້ວ ວິນັຍທີ່ເຮົາບັນ ຍັດໄວ້ແລ້ວ ນັ້ນລະຄືສາສດາຂອງພວກທ່ານ.

ດູກ່ອນອານົນ.... ພິຊຸທັງຫຼາຍໃນປັດຈຸບັນ ຕ່າງຮຽກກັນ ດ້ວຍຄຳວ່າ "ອາວຸໂສ" ເໝືອນກັນທັງໝົດ ເມື່ອເຮົາລ່ວງ

ລັບໄປແລ້ວ ພິຊຸທີ່ເປັນພຣະເຖຣະ ມີພັນສາຫຼາຍກວ່າ ຄວນ ຮຽກພິຊຸທີ່ມີພັນສານອ້ຍກວ່າໂດຍຊື່ ໂດຍໂຄຕ.

ພິຊຸທີ່ມີພັນສາອ່ອນກວ່າ ຄວນຮຽກພິຊຸທີ່ມີພັນສາຫຼາຍກວ່າ ວ່າ ພັນເຕ ຫຼືອາຍັດສະມາ.

ດູກ່ອນອານົນ... ສິ່ງທີ່ມີຄວາມຈຳນົງ ຫວັງທີ່ຈະຖອນສິກຂາ ບົດເລັກນ້ອຍ ກໍຈົ່ງຖອນໄດ້. ສຳລັບພຣະສັນນະໃຫ້ສົງລົງພົມ ທັນ ຄືບໍ່ເວົ້າຈານຳດ້ວຍ ບໍ່ກ່າວຕັກເຕືອນ ບໍ່ສັ່ງສອນ ຫຼັງ ຈາກໄດ້ສອບຖາມພິຊຸສົງໃນທີ່ປະຊຸມນັ້ນວ່າ ຍັງມີຜູ້ໃດ ສົງ ສັຍອັນໃດກ່ຽວກັບພຣະພຸທ ພຣະທັມ ພຣະສົງ ມັກຄະ ແລະ ປະຕິປະທາ ກໍໃຫ້ຖາມເສັຽ ຈົ່ງສັ່ງສອນເຊັ່ນນີ້ ເຖິງ ໓ ຄັ້ງ.



ເມື່ອສົງທັງປວງນິ້ງຢູ່ ຈົ່ງຕັດປັດສິມວາຈາວ່າ: "ຫນຸທທາ ນິ ພິກຸຂເວ ອາມນຸຕຍານິໂວ ວຍທມຸມາ ສຊຸ ຂາຣາ ອປຸປມາເທນ ສມຸປາເທຖ".

ແປວ່າ ບັດນີ້ ເຮົາຂໍເຕືອນທ່ານທັງຫຼາຍວ່າ ສັງຂານເປັນສິ່ງ ທີ່ຊື້ນເປັນທຳມະດາ ທ່ານທັງຫຼາຍຈົ່ງປະຕິບັດທັມໃຫ້ພ້ອມ ພຽງດ້ວຍຄວາມບໍ່ປະມາດ ເຖີດ.

ພໍກ່າວຈົບ ພຣະພຸທເຈົ້າກໍພັບພຣະໂອດນິ້ງຫຼັບ ພຣະເນຕ ເຂົ້າສູ່ປະຖົມມະຊານ ອອກຈາກປະຖົມມະຊານ ຜ່ານຂຶ້ນ ໄປເຖິງສັນຍາເວທະຍິຕະນິໂຣທະສະມາບັດ ແລ້ວຍ້ອນຖອຍ ຫຼັງຈາກ ສັນຍາເວທະຍິຕະນິໂຣທະສະມາບັດ ກັບສູ່ປະຖົມ ມະຊານ ແລ້ວຍ້ອນໄປເຖິງ ຈະຕຸຕະຖະຊານ ແລ້ວໃນລະ

ຫວ່າງອອກຈາກ ຈະຕຸຕະຖະຊານ ນັ້ນເອງ ພຣະພຸທເຈົ້າກໍ ຊົງສເດັດດັບຂັນ ເຂົ້າສູ່ປະຣິນິພພານ ໂດຍສນິດ.



ວັນເດືອນປີສໍາຄັນກ່ຽວກັບພຣະພຸທເຈົ້າ

໑. ຈຸຕິເຂົ້າຢູ່ໃນຄັນ "ທ້ອງ" ພຣະມາດາ ວັນພະຫັດ ວັນເພັງ ເດືອນອາສາຫະ ປີຣະກາ (ປີໄກ່)

໒. ປະສູຕ ວັກສຸກ ວັນເພັງ ເດືອນວິສາຂະ ປີຈໍ (ປີຫມາ)

໓. ໄດ້ຮັບຕໍາແຫນ່ງເປັນຣາຊທາຍາຕ ປີສລຸ (ປີງົວ)

໔. ສເດັດອອກບວດ ປີມະເສັງ (ປີງູ)

໕. ສເວີຍຂອງເບື່ອ ວັນເພັງ ເດືອນມາຂະ ຫຼັງຈາກອອກວັດ ສາທິ ໔໕ ໄດ້ ໔ ເດືອນ

໖. ປະຣິນິພພານ ວັນອັງຄານ ວັນເພັງ ເດືອນວິສາຂະ ປີມະເສັງ (ປີງູ)